ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມນະໂຍບາຍເງິນຕາ

ເລກທີ 905 /ກນງ

ນະຄອນຫຼວງວຽງຈັນ, ວັນທີ 31 ສິງຫາ 2020

## ແຈ້ງການ

ເຖິງ: ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ໃນຂອບເຂດທົ່ວປະເທດ

ເລື່ອງ: ການເປີດບັນຊີເງິນຝາກ ໃຫ້ແກ່ຜູ້ທີ່ໄດ້ຮັບພິຈາລະນາໃຫ້ດຳເນີນທຸລະກິດແລກປ່ຽນເງິນຕາ.

- ອີງຕາມຂໍ້ຕົກລົງວ່າດ້ວຍທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 393/ທຫລ, ລົງວັນທີ 02 ກໍລະກົດ 2020;
- ອີງຕາມກົນໄກການຈັດຕັ້ງປະຕິບັດການອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ.

ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ, ຂໍແຈ້ງມາຍັງບັນດາທະນາຄານທຸລະກິດໃນຂອບເຂດທົ່ວປະເທດ ກ່ຽວກັບການໃຫ້ບໍລິການເປີດບັນຊີເງິນຝາກໃຫ້ແກ່ຜູ້ທີ່ໄດ້ຮັບພິຈາລະນາອະນຸຍາດໃຫ້ດຳເນີນທຸລະກິດແລກປ່ຽນເງິນຕາ. ອີງຕາມກົນໄກການຈັດຕັ້ງປະຕິບັດໃນການຄົ້ນຄວ້າພິຈາລະນາອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງກົມນະໂຍບາຍເງິນຕາ ກຳນົດໃຫ້ຜູ້ທີ່ໄດ້ຮັບພິຈາລະນາ ຕ້ອງເປີດບັນຊີເງິນຝາກກັບທະນາຄານທຸລະກິດ ສອດຄ່ອງຕາມຊື່ທີ່ລະບຸໃນໃບທະບຽນວິສາຫະກິດ ກ່ອນການເຄື່ອນໄຫວທຸລະກິດຕົວຈິງ. ສະນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງການດຳເນີນທຸລະກິດດັ່ງກ່າວ ມີຄວາມຄ່ອງຕົວ ແລະ ອຳນວຍຄວາມສະດວກໃນການເປີດບັນຊີເງິນຝາກ ເພື່ອດຳເນີນທຸລະກິດໃຫ້ແກ່ພວກກ່ຽວ ຈຶ່ງແຈ້ງມາຍັງທ່ານ ເພື່ອພິຈາລະນາເປີດບັນຊີເງິນຝາກໃຫ້ແກ່ຜູ້ທີ່ໄດ້ຮັບພິຈາລະນາອະນຸຍາດໃຫ້ດຳເນີນທຸລະກິດແລກປ່ຽນເງິນຕາ ໂດຍອີງໃສ່ໃບທະບຽນວິສາຫະກິດ ຂອງຮ້ານແລກປ່ຽນເງິນຕາ ແລະ ແຈ້ງການ ທີ່ຕິດພັນກັບການເປີດບັນຊີເງິນຝາກຂອງຜູ້ໄດ້ຮັບພິຈາລະ ນາດຳເນີນທຸລະກິດແລກປ່ຽນເງິນຕາ ອອກໂດຍກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ. ສຳລັບຮ້ານແລກປ່ຽນເງິນຕາ ທີ່ໄດ້ຮັບອະນຸຍາດໃນໄລຍະຜ່ານມາ ແມ່ນໃຫ້ຈັດຕັ້ງປະຕິບັດອີງຕາມຂໍ້ຕົກລົງວ່າດ້ວຍທຸລະກິດແລກປ່ຽນເງິນຕາ ສະ ບັບເລກທີ 393/ທຫລ, ລົງວັນທີ 02 ກໍລະກົດ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມນະໂຍບາຍເງິນຕາ

ທະນາຄານ ແຫ່ງ ສປປ ລາວ
ກົມນະໂຍບາຍເງິນຕາ

ຄຳພຸດ ສິດທິລາດ

ຕິດຕໍ່ພົວພັນ: ພະແນກຄຸ້ມຄອງເງິນຕາຕ່າງປະເທດ
ເບີໂທ: 021-264590